## ການເຮັດຫຍ້າໝັກ

ເປັນວິທີຖະໜອມອາຫານໄວ້ໃນສະພາບຄວາມຊຸ່ມສູງໃນພາຊະນະປິດປ້ອງກັນອາກາດຈາກພາຍນອກຈິ່ງເກີດການໝັກ ສາມາດເກັບໄວ້ໄດ້ດົນໂດຍສ່ວນປະກອບຕ່າງໆ ແລະ ຄຸນຄ່າ ຂອງອາຫານບໍ່ປ່ຽນແປງ ເໝາະສຳລັບໄວ້ໃຊ້ລ້ຽງສັດໃນຍາມຂາດແຄນຫຍ້າສົດ ແລະ ຈຳໜ່າຍ.



## ອຸປະກອນ

- ເຄື່ອງຈັກຕັດຫຍ້າ ມີດ ພ້າ.
- ພາຊະນະບັນຈຸຫຍ້າສຳລັບໝັກ ເຊັ່ນ: ຫລຸມ ຖັງ ຖົງຢາງ
- ຜ້າຢາງສຳລັບປິດປາກຫລຸມ ຫລື ຖັງ ເພື່ອປ້ອງກັນອາກາດ ຈາກພາຍນອກ.
- ສານເສີມທີ່ເຮັດໃຫ້ຫຍ້າໝັກດີຂຶ້ນ ເຊັ່ນ: ກາກນ້ຳຕານ ສາລີບົດ ມັນຕົ້ນແຫ້ງ.
- ຊິງ ຊັ່ງນ້ຳໜັກ.



## ຂັ້ນຕອນການເຮັດ

1. ນຳຫຍ້າມາຫັ່ນດ້ວຍເຄື່ອງຈັກ ຫລື ສັບດ້ວຍມີໃຫ້ມີຂະໜາດ 2-3 ຊມ.



2. ບັນຈຸຫຍ້າທີ່ຫັ່ນແລ້ວໃສ່ພາຊະນະຢຽບໃຫ້ແໜ້ນເພື່ອໄລ່ອາກາດອອກໃຫ້ໝົດ.



3. ໂຮຍກາກນ້ຳຕານ ຫລື ສາລີບົດລົງເປັນຊັ້ນ ໆ ໃນອັດຕາ 2 ກລ/ 100 ກລ ຫຍ້າ) ເພື່ອຊ່ວຍໃຫ້ການໝັກດີຍິ່ງຂຶ້ນ.



4. ປິດປາກຖັງ ຫລື ປາກຖົງຢາງໃຫ້ມິດຊິດເພື່ອບໍ່ໃຫ້ອາກາດພາຍນອກເຂົ້າຫາກຖົງຢາງຮົ່ວໃຫ້ໃຊ້ເທບປິດຮອຍຮົ່ວ.



5. ຫລັງຈາກ 21 ວັນ ຫຍ້າສົດຈະປ່ຽນສະພາບເປັນຫຍ້າໝັກ ສາມາດນຳໃຊ້ໄດ້ ຫລື ເກັບໄວ້ໄດ້ດົນ ເຖິງ 1 ປີ.



6. ການນຳໃຊ້: ໃຫ້ສັດກິນໃນຍາມຂາດຫຍ້າສົດ.



## ລັກສະນະຂອງຫຍ້າໝັກທີ່ດີ:

1. ມີກິ່ນຫອມສົ້ມບໍ່ເນົ່າເໝັນ
2. ເນື້ອພືດບໍ່ເມືອກ ບໍ່ເລະ
3. ມີສີຂຽວອົມເຫລືອງ
4. ມີລົດສົ້ມ
5. ບໍ່ມີເຊື້ອຣາ ຫລື ບູດເນົ່າ.



## ຂໍ້ຄວນລະວັງ

- ເມື່ອເປີດພາຊະນະຄວນໃຊ້ຫຍ້າໝັກໃຫ້ໝົດໃນເວລາອັນສັ້ນ ແລະ ຢ່າເປີດໃຫ້ກວ້າງເກີນໄປ ເພື່ອໃຫ້ຫຍ້າໝັກເສື່ອມຄຸນນະພາບຊ້າລົງ.
- ຫຍ້າທີ່ນຳມາໝັກຄວນລົດຄວາມຊຸ່ມ ໂດຍການຕາກແດດ 1-2 ແດດ ເພື່ອປ້ອງກັນການເນົ່າເສຍ.
- ລະວັງໜູ, ມົດ ຫລື ແມງໄມ້ທີ່ຈະມາກັດພາຊະນະ ຫລື ຜ້າຢາງທີ່ປິດເປັນຮູອາກາດ ພາຍນອກເຂົ້າໄປເຮັດໃຫ້ຫຍ້າໝັກເນົ່າເສຍ.

# ຄູ່ມື
# ການເຮັດຫຍ້າໝັກ

## (ອາຫານແຮ ສຳລັບສັດລ້ຽງເອື້ອງ)

ມິນາ 2013




NTPC
Powering the Future

**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່